ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ                                        ເລກທີ 22 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2022

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກາແດງແຫ່ງຊາດລາວ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍວຽກງານກາແດງລາວ, ສະບັບເລກທີ 28/ສພຊ, ລົງວັນທີ 31 ຕຸລາ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 09/ພນ, ລົງວັນທີ 13 ມັງກອນ 2022.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການກາແດງແຫ່ງຊາດລາວ ຕາມລັດຖະທຳມະນູນ ແລະ ກົດໝາຍ ແຫ່ງ ສປປ ລາວ ກ່ຽວກັບວຽກງານມະນຸດສະທຳ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ອົງການກາແດງແຫ່ງຊາດລາວ ຂຽນເປັນຕົວອັກສອນຫຍໍ້ວ່າ: "ກດລ" ຫຼື ຂຽນເປັນພາສາຝຣັ່ງ Croix-Rouge Lao, ແມ່ນການຈັດຕັ້ງທາງສັງຄົມຂອງ ສປປ ລາວ ທີ່ເຄື່ອນໄຫວວຽກງານມະນຸດສະທຳ ຢ່າງເປັນເອກະລາດ ຢູ່ພາຍໃຕ້ລັດຖະທຳມະນູນ, ກົດໝາຍ ແລະ ເຈັດຫຼັກການພື້ນຖານ ຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ, ໂດຍມີປະທານປະເທດເປັນປະທານກິດຕິມະສັກ, ມີຖານະເທົ່າກັບ ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມອື່ນ.

ອົງການກາແດງແຫ່ງຊາດລາວ ມີພາລະບົດບາດ ໃນການຊ່ວຍເຫຼືອດ້ານມະນຸດສະທຳ ທີ່ມີການເຂົ້າຮ່ວມຂອງສັງຄົມ ເຊັ່ນ: ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ, ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ, ການສົ່ງເສີມສຸຂະພາບຂັ້ນພື້ນຖານ, ການປະຖົມພະຍາບານ, ການກູ້ໄພສຸກເສີນ, ການໂຄສະນາຂົນຂວາຍແຫຼ່ງທຶນ, ການສ້າງສະມາຊິກ ແລະ ອາສາສະໝັກກາແດງ, ການສືບຫາວທາຍາດພີ່ນ້ອງ ແລະ ການພົວພັນ-ຮ່ວມມືສາກົນ ດ້ວຍການຮ່ວມມື ຈາກອົງການປະສານສົມທົບວຽກງານກາແດງ ເພື່ອສ້າງ ແລະ ສົ່ງເສີມຄຸນຄ່າດ້ານມະນຸດສະທຳ ໂດຍບໍ່ຈຳແນກການປະຕິບັດ.

# ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ອົງການກາແດງແຫ່ງຊາດລາວ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄວ້າ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານມະນຸດສະທຳ ມາເປັນແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດ ຂອງອົງການກາແດງແຫ່ງຊາດລາວ ພ້ອມທັງຮັບຜິດຊອບຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ, ຮ່າງນິຕິກຳ ກ່ຽວກັບວຽກງານອົງການກາແດງລາວ ທີ່ກຳນົດຢູ່ໃນພາລະບົດບາດ, ໜ້າທີ່ ຄວາມຮັບຜິດຊອບ ຂອງຕົນ ເພື່ອນຳສະເໜີຂັ້ນເທິງ ປະກາດໃຊ້;
4. ສ້າງແຜນຍຸດທະສາດ, ແຜນງານ, ແຜນການ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ, ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ, ການສົ່ງເສີມສຸຂະພາບຂັ້ນພື້ນຖານ, ການປະຖົມພະຍາບານ, ການກູ້ໄພສຸກເສີນ, ການໂຄສະນາຂົນຂວາຍແຫຼ່ງທຶນ, ການສ້າງສະມາຊິກ ແລະ ອາສາສະໝັກກາແດງ, ການສືບຫາວຫາຍາດພີ່ນ້ອງ, ການພົວພັນ ແລະ ຮ່ວມມືສາກົນ;
5. ໂຄສະນາ-ເຜີຍແຜ່ ແລະ ສະໜອງ ຂໍ້ມູນຂ່າວສານ ກ່ຽວກັບການເຄື່ອນໄຫວວຽກງານ ຂອງອົງການກາແດງແຫ່ງຊາດລາວ, ຂະບວນການກາແດງສາກົນ, ເຈັດຫຼັກການພື້ນຖານ ຂອງຂະບວນການກາແດງສາກົນ, ກົດໝາຍມະນຸດສະທຳສາກົນ ແລະ ນິຕິກຳຕ່າງໆ;
6. ໃຫ້ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ ແກ່ຜູ້ປະສົບເຄາະຮ້າຍ ຈາກໄພພິບັດທາງທຳມະຊາດ ແລະ ມະນຸດສ້າງຂຶ້ນ, ຜູ້ທຸກຍາກຂາດເຂີນ, ປ່ຽວພອຍ, ດ້ອຍໂອກາດ ແລະ ຢູ່ເຂດຫ່າງໄກສອກຫຼີກ ທາງດ້ານວັດຖຸ ແລະ ຈິດໃຈ ພ້ອມທັງ ສ້າງຄວາມເຂັ້ມແຂງດ້ານວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ, ສະໜອງ ຂໍ້ມູນ ຂ່າວສານ ແລະ ການເຕືອນໄພຕ່າງໆ, ປູກຈິດສຳນຶກບົດບາດຍິງ-ຊາຍ ເຂົ້າໃນວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດ ໃຫ້ແກ່ສັງຄົມ, ຊຸມຊົນເປົ້າໝາຍ, ພະນັກງານ ແລະ ອາສາສະໝັກກາແດງ;
7. ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງວຽກງານເລືອດ ໃນຂອບເຂດທົ່ວປະເທດ, ປຸກລະດົມຂົນຂວາຍຜູ້ບໍລິຈາກເລືອດ ດ້ວຍຄວາມສະໝັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ, ຮັບການບໍລິຈາກເລືອດ, ຄົ້ນຄວ້າວິທະຍາສາດ, ສິດສອນ, ກວດວິເຄາະວິໄຈເລືອດ, ເກັບຮັກສາ-ແຍກສ່ວນປະກອບຂອງເລືອດ, ຄຸ້ມຄອງຄຸນນະພາບ ແລະ ຕອບສະໜອງເລືອດ ໃຫ້ຄົນເຈັບ ຢ່າງພຽງພໍ, ປອດໄພ ແລະ ທັນເວລາ;
8. ສົ່ງເສີມສຸຂະພາບຂັ້ນພື້ນຖານ ໃຫ້ແກ່ຊຸມຊົນ, ຜູ້ປະສົບໄພພິບັດ, ຜູ້ອາຍຸສູງ, ຜູ້ດ້ອຍໂອກາດ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ;

9. ປະສານສົມທົບ ກັບບັນດາ ກະຊວງ, ອົງການລັດຂັ້ນສູນກາງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງໃນວຽກງານຈັດຫານ້ຳສະອາດ, ສຸຂາພິບານ, ອະນາໄມ, ໂພຊະນາການ, ສຸຂະພາບແມ່ ແລະ ເດັກ ແລະ ວຽກງານຕ້ານເອດ; ໃຫ້ການຊ່ວຍເຫຼືອປະຖົມພະຍາບານທາງດ້ານຮ່າງກາຍ ແລະ ຈິດໃຈ; ຊ່ວຍກູ້ໄພສຸກເສີນໃຫ້ແກ່ຜູ້ຖືກເຄາະຮ້າຍ ທາງທຳມະຊາດ ແລະ ມະນຸດສ້າງຂຶ້ນ ລວມທັງ ພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່;
10. ຊ່ວຍໃນການສືບຫາວຫາຍາດພີ່ນ້ອງ ຂອງປະຊາຊົນ ຜູ້ທີ່ມີຄວາມຕ້ອງການ ຊອກຫາພີ່ນ້ອງຂອງຕົນ, ສ້າງ ແລະ ຄຸ້ມຄອງສະມາຊິກ-ອາສາສະໝັກກາແດງລາວ ແລະ ສະໜັບສະໜູນການສົ່ງເສີມຄຸນຄ່າທາງດ້ານມະນຸດສະທຳ;
11. ລະດົມຂົນຂວາຍ, ຊອກແຫຼ່ງທຶນ, ສ້າງແຫຼ່ງລາຍຮັບ ໃຫ້ແກ່ວຽກງານກາແດງລາວ ຈາກແຫຼ່ງລາຍຮັບພາຍໃນ, ຕ່າງປະເທດ ແລະ ສາກົນ ຕາມເງື່ອນໄຂຕົວຈິງ;
12. ພົວພັນ ແລະ ຮ່ວມມືສາກົນ ກ່ຽວກັບວຽກງານກາແດງ ດ້ວຍການແລກປ່ຽນບົດຮຽນ ຂໍ້ມູນ ຂ່າວສານທີ່ເປັນປະໂຫຍດ, ຂົນຂວາຍແຫຼ່ງທຶນ, ວັດຖຸປະກອນ, ເຕັກນິກ ແລະ ການພັດທະນາດ້ານ ບຸກຄະລະກອນ ລວມທັງການປະຕິບັດພັນທະຂອງຕົນ ຕໍ່ສາກົນ;
13. ສ້າງຂີດຄວາມສາມາດ ຂອງອົງການກາແດງແຫ່ງຊາດລາວ ແຕ່ລະຂັ້ນ ໃຫ້ປະຕິບັດໜ້າທີ່ວຽກງານຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ;
14. ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ໃນການເຄື່ອນໄຫວ ຂອງອົງການກາແດງແຫ່ງຊາດລາວ ໃນຂອບເຂດທົ່ວປະເທດ;
15. ຄົ້ນຄວ້າ ສ້າງ ແລະ ປັບປຸງ ໂຄງປະກອບການຈັດຕັ້ງ, ການກຳນົດຕຳແໜ່ງງານ ຂອງອົງການກາແດງແຫ່ງຊາດລາວ, ຊີ້ນຳ, ບຳລຸງສ້າງ, ກໍ່ສ້າງ, ສຶກສາອົບຮົມ, ຄຸ້ມຄອງ, ນຳໃຊ້ມາດຕະການ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ຂອງອົງການກາແດງແຫ່ງຊາດລາວ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
16. ຊຸກຍູ້ ແລະ ສົ່ງເສີມ ບົດບາດຍິງ-ຊາຍ ຂອງອົງການກາແດງແຫ່ງຊາດລາວ ໃຫ້ເປັນລະບົບ ແລະ ເປັນປະຈຳ;
17. ສະຫຼຸບ, ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານ ຂອງອົງການກາແດງແຫ່ງຊາດລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
18. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 4 ຂອບເຂດສິດ**

ອົງການກາແດງແຫ່ງຊາດລາວ ມີຂອບເຂດສິດ ດັ່ງນີ້:

1. ສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ການຈັດຕັ້ງຂັ້ນຕ່າງໆ ທີ່ຂຶ້ນກັບອົງການກາແດງແຫ່ງຊາດລາວ;
2. ຄຸ້ມຄອງ, ຊີ້ນຳການຈັດຕັ້ງ ແລະ ການເຄື່ອນໄຫວ ດ້ານເຕັກນິກ, ວິຊາການ ຂອງອົງການກາແດງຂັ້ນທ້ອງຖິ່ນ ຕາມກົດໝາຍ ແລະ ລະບຽບການ;
3. ຕິດຕາມ, ກວດກາ ການປະຕິບັດວຽກງານ ທີ່ໄດ້ກຳນົດໄວ້ໃນ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງອົງການກາແດງແຫ່ງຊາດລາວ;

4. ແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດວິໄນ, ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ແລະ ພະນັກງານຕາມສັນຍາ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ;
5. ຍ້ອງຍໍ-ຊົມເຊີຍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນໃນວຽກງານມະນຸດສະທຳ ຂອງອົງການກາແດງແຫ່ງຊາດລາວ;
6. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ກ່ຽວກັບວຽກງານ ຂອງອົງການກາແດງແຫ່ງຊາດລາວ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;
7. ຈັດຕັ້ງ ປຸກລະດົມ ແຫຼ່ງທຶນ ແລະ ສ້າງແຫຼ່ງລາຍຮັບ ຈາກທົ່ວສັງຄົມ, ການຈັດຕັ້ງ ແລະ ບຸກຄົນທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ວຽກງານມະນຸດສະທຳ ຂອງອົງການກາແດງແຫ່ງຊາດລາວ;
8. ຮຽກໂຮມ ພະນັກງານການນຳ, ພະນັກງານຄຸ້ມຄອງ ແລະ ວິຊາການ ຂອງອົງການກາແດງແຫ່ງຊາດລາວເຂົ້າຮ່ວມປະຊຸມ ຫຼື ສ່ອງແສງວຽກງານ, ກອງປະຊຸມ, ສຳມະນາ ແລະ ຈັດຝຶກອົບຮົມ, ເຂົ້າຮ່ວມ ແລະປະກອບຄຳຄິດເຫັນໃນກອງປະຊຸມ ກ່ຽວກັບວຽກງານກາແດງ;
9. ອະນຸມັດໃຫ້ບັນດາຫ້ອງການ ແລະ ສະຖາບັນ ຈັດກອງປະຊຸມ, ຝຶກອົບຮົມ ຫຼື ສຳມະນາທາງວິຊາການໃນແຕ່ລະໄລຍະ;
10. ສ້າງແຜນການ-ງົບປະມານ, ຄຸ້ມຄອງລາຍຮັບ-ລາຍຈ່າຍ, ຄຸ້ມຄອງກອງທຶນຊ່ວຍເຫຼືອສຸກເສີນ, ກອງທຶນເລືອດ ແລະ ແຫຼ່ງລາຍຮັບອື່ນ ຂອງອົງການກາແດງແຫ່ງຊາດລາວ ຕາມກົດໝາຍ ແລະລະບຽບການ;
11. ແຕ່ງຕັ້ງ ແລະ ຍຸບເລີກ ຄະນະກຳມະການ, ຄະນະຮັບຜິດຊອບ ໂຄງການຕ່າງໆ ໃນການປະຕິບັດໜ້າທີ່ສະເພາະໃດໜຶ່ງ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ໃນແຕ່ລະໄລຍະ;
12. ພົວພັນ, ຮ່ວມມື, ພົບປະ ເຈລະຈາ, ເຊັນຂໍ້ຕົກລົງ, ສັນຍາ, ບົດບັນທຶກການຮ່ວມມື ກັບ ຄະນະກຳມະການກາແດງສາກົນ, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ກາແດງປະເທດຕ່າງໆ, ອົງການຈັດຕັ້ງສາກົນ, ການຈັດຕັ້ງ ແລະ ບຸກຄົນ ຕາມລະບຽບການ;
13. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງອົງການກາແດງແຫ່ງຊາດລາວ ປະກອບມີ:

1. ຫ້ອງການອົງການກາແດງແຫ່ງຊາດລາວ;
2. ຫ້ອງການຂົນຂວາຍແຫຼ່ງທຶນ ແລະ ຊ່ວຍເຫຼືອບັນເທົາທຸກ;
3. ຫ້ອງການສົ່ງເສີມສຸຂະພາບຊຸມຊົນ;
4. ສະຖາບັນເລືອດແຫ່ງຊາດ.

ອົງການກາແດງແຫ່ງຊາດລາວ ມີກົງຈັກການຈັດຕັ້ງຂັ້ນແຂວງ ມີຖານະທຽບເທົ່າກັບ ພະແນກ ແລະ ອົງການລັດຂັ້ນແຂວງ ຕາມການຕົກລົງຂອງອົງການປົກຄອງທ້ອງຖິ່ນ ໂດຍການເຫັນດີ ຂອງອົງການກາແດງແຫ່ງຊາດລາວ ແລະ ກະຊວງພາຍໃນ.

ຂັ້ນເມືອງ ມີຫ້ອງການກາແດງ ຊຶ່ງຖືກສ້າງຕັ້ງຂຶ້ນ ຕາມການຕົກລົງເຫັນດີ ຂອງອົງການປົກຄອງ ຂັ້ນເມືອງ ແລະ ເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນ, ສຳລັບ ເມືອງ, ເທດສະບານ ຫຼື ນະຄອນ ທີ່ບໍ່ມີເງື່ອນໄຂ ໃນການສ້າງຕັ້ງຫ້ອງການກາແດງ ຕ້ອງໃຫ້ມີຜູ້ປະສານງານ ສັງກັດຢູ່ຫ້ອງວ່າການປົກຄອງ ຂັ້ນເມືອງ.

## ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

### ກ. ໂຄງປະກອບດ້ານບຸກຄະລາກອນຂອງອົງການກາແດງແຫ່ງຊາດລາວ ປະກອບມີ:

1. ປະທານໜຶ່ງທ່ານ ມີຄວາມຮັບຜິດຊອບ ຕໍ່ຜົນສຳເລັດ ຫຼື ຂໍ້ຂາດຕົກບົກຜ່ອງໃນການປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງອົງການກາແດງແຫ່ງຊາດລາວ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

   ໃນກໍລະນີຕິດຂັດ ປະທານຕ້ອງມອບສິດໃຫ້ຮອງປະທານ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;
2. ຮອງປະທານຈຳນວນໜຶ່ງຊຶ່ງໄດ້ຮັບ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ, ມີຄວາມຮັບຜິດຊອບໃນການຊ່ວຍວຽກປະທານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງວຽກ ຂອງປະທານ;

   ຮອງປະທານ ເປັນຜູ້ຮັກສາການແທນ ໃນເວລາປະທານຕິດຂັດ;
3. ຫົວໜ້າຫ້ອງການ ແລະ ຫົວໜ້າສະຖາບັນ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ;
4. ຮອງຫົວໜ້າຫ້ອງການ, ຮອງຫົວໜ້າສະຖາບັນ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

### ຂ. ໂຄງປະກອບດ້ານບຸກຄະລາກອນຂັ້ນທ້ອງຖິ່ນ

ຂັ້ນແຂວງ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າ ອົງການກາແດງຂັ້ນແຂວງ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ, ຫົວໜ້າ ແລະ ຮອງຫົວໜ້າສູນເລືອດ ຂັ້ນແຂວງ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ຂັ້ນເມືອງ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການກາແດງຂັ້ນເມືອງ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ, ຜູ້ປະສານງານ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

# ໝວດທີ 4
# ອົງການປະສານສົມທົບວຽກງານກາແດງ

## ມາດຕາ 7 ອົງການປະສານສົມທົບວຽກງານກາແດງລາວ

ອົງການປະສານສົມທົບວຽກງານກາແດງລາວ ຂັ້ນສູນກາງ ມີ ດັ່ງນີ້:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ກະຊວງສາທາລະນະສຸກ;
3. ກະຊວງສຶກສາທິການ ແລະ ກິລາ;

4. ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ;
5. ກະຊວງການຕ່າງປະເທດ;
6. ກະຊວງປ້ອງກັນປະເທດ;
7. ກະຊວງປ້ອງກັນຄວາມສະຫງົບ;
8. ກະຊວງພາຍໃນ;
9. ກະຊວງການເງິນ;
10. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
11. ກະຊວງ, ອົງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 8 ອົງການປະສານສົມທົບວຽກງານກາແດງ ຂັ້ນແຂວງ**

ອົງການປະສານສົມທົບວຽກງານກາແດງ ຂັ້ນແຂວງ ມີ ດັ່ງນີ້:

1. ພະແນກແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກສາທາລະນະສຸກ;
3. ພະແນກສຶກສາທິການ ແລະ ກິລາ;
4. ພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ;
5. ພະແນກການຕ່າງປະເທດ;
6. ກອງບັນຊາການທະຫານ ຂັ້ນແຂວງ;
7. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
8. ພະແນກພາຍໃນ;
9. ພະແນກການເງິນ;
10. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ;
11. ພະແນກ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 9 ຫ້ອງການປະສານສົມທົບວຽກງານກາແດງ ຂັ້ນເມືອງ**

ຫ້ອງການປະສານສົມທົບວຽກງານກາແດງ ຂັ້ນເມືອງ ມີ ດັ່ງນີ້:

1. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ;
2. ຫ້ອງການສາທາລະນະສຸກ;
3. ຫ້ອງການສຶກສາທິການ ແລະ ກິລາ;
4. ຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ;
5. ຫ້ອງການການຕ່າງປະເທດ;
6. ກອງບັນຊາການທະຫານ ຂັ້ນເມືອງ;
7. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
8. ຫ້ອງການພາຍໃນ;
9. ຫ້ອງການການເງິນ;
10. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນເມືອງ;
11. ຫ້ອງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ຫຼັກການ ແລະ ລະບອບແບບແຜນວິທີເຮັດວຽກ

**ມາດຕາ 10 ຫຼັກການ**

ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງອົງການກາແດງແຫ່ງຊາດລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1 ລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານລວມຂອງອົງການກາແດງແຫ່ງຊາດລາວ;

2 ປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ, ຜູ້ຊົງຄຸນວຸດທິກາແດງ, ສະມາຊິກກາແດງ ແລະ ອາສາສະໝັກກາແດງ;

3 ຮັບປະກັນການຈັດຕັ້ງປະຕິບັດ ຕາມແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ ສປປ ລາວ;

4 ເປີດເຜີຍ, ໂປ່ງໃສ, ຍຸຕິທຳ, ສາມາດກວດສອບໄດ້ ແລະ ບໍ່ຫວັງຜົນກຳໄລ;

5 ຮັບປະກັນເຈັດຫຼັກການພື້ນຖານຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ, ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 11 ແບບແຜນວິທີເຮັດວຽກ**

ແບບແຜນວິທີເຮັດວຽກ ຂອງອົງການກາແດງແຫ່ງຊາດລາວ ມີ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ, ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍພັດທະນາຕາມແຜນຍຸດທະສາດ ເພື່ອພັດທະນາວຽກງານ ຂອງອົງການກາແດງແຫ່ງຊາດລາວ;
2. ເຮັດວຽກມີການ ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບຕີລາຄາ ຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລະບອບສ່ອງແສງລາຍງານ ຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກອງປະຊຸມວິຊາການ ແລະ ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຕົນ ຕໍ່ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ນາຍົກ, ຮອງນາຍົກລັດຖະມົນຕີ. ສຳລັບ ອົງການກາແດງຂັ້ນທ້ອງຖິ່ນ ໃຫ້ລາຍງານຕໍ່ ຫ້ອງວ່າການປົກຄອງ ຂັ້ນທ້ອງຖິ່ນ;
4. ປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນ ລວມທັງ ການພົວພັນຮ່ວມມືກັບສາກົນ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ວັນກາແດງລາວ**

ວັນທີ 01 ມັງກອນ 1955 ເປັນວັນສ້າງຕັ້ງອົງການກາແດງແຫ່ງຊາດລາວ, ໃຫ້ອົງການກາແດງ ແຕ່ລະຂັ້ນຈັດຕັ້ງການສະເຫຼີມສະຫຼອງວັນດັ່ງກ່າວ ໃນທຸກໆ ປີ.

**ມາດຕາ 13 ທຸງ, ເຄື່ອງໝາຍ, ກາໝາຍ ແລະ ເຄື່ອງແບບ**

ທຸງອົງການກາແດງແຫ່ງຊາດລາວ ມີພື້ນສີຂາວ ມີເຄື່ອງໝາຍກາກະບາດສີແດງຢູ່ເຄິ່ງກາງ, ຂະໜາດຂອງທຸງລວງກວ້າງເທົ່າກັບສອງສ່ວນສາມຂອງລວງຍາວ; ສໍາລັບການນໍາໃຊ້ແມ່ນອີງໃສ່ຈຸດປະສົງ, ຂະໜາດໃຫຍ່ນໍາໃຊ້ເພື່ອປົກປ້ອງ; ຂະໜາດກາງ ແລະ ນ້ອຍ ນໍາໃຊ້ເພື່ອຊີ້ບອກ.

ເຄື່ອງໝາຍຂອງອົງການກາແດງແຫ່ງຊາດລາວ ເປັນກາກະບາດສີແດງ, ພື້ນສີຂາວ, ມີຂອບວົງມົນສີແດງສອງຂອບ ພ້ອມກາກະບາດສີແດງ ລະຫວ່າງສອງຂອບວົງມົນມີໂຕໜັງສືສີແດງເປັນພາສາລາວ "ອົງການກາແດງແຫ່ງຊາດລາວ" ແລະ ພາສາຝຣັ່ງ "Croix-Rouge Lao" ນໍາໃຊ້ເປັນສັນຍາລັກສະເພາະການເຄື່ອນໄຫວວຽກງານມະນຸດສະທໍາ ຂອງອົງການກາແດງແຫ່ງຊາດລາວ ເທົ່ານັ້ນ.

ກາໝາຍກາແດງ ແມ່ນ ກາກະບາດສີແດງພື້ນສີຂາວ, ມີຂະໜາດ ຕາມຄວາມເໝາະສົມ, ມີແຕ່ອົງການກາແດງແຫ່ງຊາດລາວ ທີ່ສາມາດນໍາໃຊ້ໄດ້ ແລະ ສໍາລັບພາກສ່ວນອື່ນ ຈະນໍາໃຊ້ຕ້ອງໄດ້ຮັບອະນຸຍາດຈາກອົງການກາແດງແຫ່ງຊາດລາວ.

ເຄື່ອງແບບອົງການກາແດງແຫ່ງຊາດລາວ ຕ້ອງມີເຄື່ອງໝາຍຂອງອົງການກາແດງແຫ່ງຊາດລາວໃນການປະຕິບັດໜ້າທີ່ວຽກງານ.

**ມາດຕາ 14 ງົບປະມານ ແລະ ຕາປະທັບ**

ອົງການກາແດງແຫ່ງຊາດລາວ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ ເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກໍານົດ.

ນອກຈາກນັ້ນ, ງົບປະມານ ຂອງອົງການກາແດງແຫ່ງຊາດລາວ ຍັງໄດ້ມາຈາກແຫຼ່ງທຶນຕ່າງໆ ເປັນຕົ້ນການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ອົງການຈັດຕັ້ງສາກົນ, ເງິນບໍາລຸງຂອງສະມາຊິກກາແດງ, ການເຄື່ອນໄຫວກິດຈະກໍາ ແລະ ລາຍຮັບອື່ນ ທີ່ຖືກຕ້ອງ ຕາມກົດໝາຍ ເພື່ອນໍາໃຊ້ເຂົ້າໃນວຽກງານມະນຸດສະທໍາ ຕາມແຜນການ, ແຜນງານ, ໂຄງການ ແລະ ວຽກງານສຸກເສີນ.

**ມາດຕາ 15 ການຜັນຂະຫຍາຍ**

ມອບໃຫ້ປະທານ ອົງການກາແດງແຫ່ງຊາດລາວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາຫ້ອງການ, ສະຖາບັນ ແລະ ອົງການກາແດງຂັ້ນທ້ອງຖິ່ນ ຕາມທີ່ກໍານົດໄວ້ໃນມາດຕາ 5 ຂອງດໍາລັດສະບັບນີ້.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ອົງການກາແດງແຫ່ງຊາດລາວ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກາແດງລາວ ສະບັບເລກທີ 138/ລບ, ລົງວັນທີ 13 ພຶດສະພາ 2013 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ